## ບົດທີ 8

# ພະເຢຊູປະນາມພວກຟາລິຊາຍ ແລະ ນັກທຳ

**1** ໃນບົດກ່ອນເຮົາຮຽນມາແລ້ວເລື່ອງທີ່ພະອົງໂຕ້ຖຽງກັບພວກສັດຕູໃນພະວິຫານ.

ກ. ການນັ້ນເກີດຂຶ້ນໃນວັນໃດ? ____________________

ຂ. ຢູ່ໃສ? ____________________

ຄ. ໃນໂອກາດນັ້ນ ພະເຢຊູຍົກຄຳອຸປະມາ 3 ປະການໃດ?

____________________

____________________

____________________

ງ. ແລ້ວເຂົາຍົກບັນຫາ 4 ປະການໃດໃນພະອົງ?

____________________

____________________

____________________

____________________

ເບິ່ງຄືວ່າ ພະເຢຊູສອນເຂົາດີປານໃດກໍຕາມ ພວກສັດຕູຂອງພະອົງ ຍັງໜ້າຊື່ໃຈຄົດ ແລະ ມີຄວາມກຽດຊັງຄືເກົ່າ ຜົນສຸດທ້າຍພະອົງ ກໍໃຈຮ້າຍກັບເຂົາ.



**2** ກ. ພະເຢຊູປະນາມສອງພວກໃດ? (ມທ 23:2) ____________ ແລະ ____________

ຂ. ພະອົງກ່າວກັບໃຜ? (ມທ 23:1) ____________ ແລະ ____________

**3** ພະເຢຊູ ປະນາມພວກຟາລິຊາຍກໍແມ່ນຢູ່ ແຕ່ຍິ່ງກວ່ານັ້ນອີກພະອົງເປີດເຜີຍຫຼັກຄຳສອນບໍ່ຈິງໃຫ້ພວກສາວົກຮູ້ ພະອົງ ສອນເຂົາໃນການວັດຜົນຫຼັກຄຳສອນຂອງພວກຟາລິຊາຍແລະນັກທຳນັ້ນ, ຄືພະອົງຍົກຕົວຢ່າງໃນການສັງເກດຄວາມຈິງແລະຄວາມບໍ່ຈິງ.ໃຫ້ທ່ານເປີດອ່ານ ເຮັບເລີ 5:13-14 ເຮົາຄວນຈະຮຽນຮູ້ວິທີວັດຜົນລະຫວ່າງສິ່ງໃດກັບສິ່ງໃດ?

____________________

**4** ຖ້າຈະໃຫ້ພວກຄຼິດສະຕຽນໝັ້ນຄົງໃນຄວາມເຊື່ອ ເຂົາຕ້ອງຮຽນຮູ້ວິທີວັດຜົນຄຳສອນຕ່າງໆ ທີ່ເຄີຍພົບກ່ອນ ຫຼືອາດ ຈະບໍ່ພົບກ່ອນດ້ວຍ. ເຂົາຕ້ອງຮູ້ວິທີສັງເກດສິ່ງທີ່ຜິດທີ່ບັງຕົວໄວ້, ຄົນໃດທີ່ໃຫຍ່ແລ້ວໃນຄວາມເຊື່ອຈະຮູ້ວິທີ ________ ຄວາມຈິງແລະຄວາມເຊື່ອ. (ຕື່ມຄວາມຂາດ)

**5** ໃນກິດຈະການ 20:28-30 ອາຈານໂປໂລກ່າວຄຳລາຈາກພວກຜູ້ດູແລຄຣິສຕຽນໃນເມືອງເອເຟໂຊ. ອາຈານໂປໂລເຕືອນ ພວກເຖົ້າແກ່ໃຫ້ຮັກສາຄຣິດສະຕະຈັກໄວ້.
ກ. ເພິ່ນວ່າພວກຜູ້ສອນບໍ່ຈິງເໝືອນຫຍັງ? ________________________________
ຂ. ຜູ້ທີ່ກ່າວປີ້ນຄວາມຈິງຈະມາຈາກໃສ? ________________________________
ຄ. ເຂົາຈະຊັກຊວນພວກສິດໃຫ້ເຮັດຫຍັງ? ________________________________

**6** ໃນພະທຳ ເອເຟໂຊ 4:14 ເພິ່ນຍົກເລື່ອງດຽວ. ເພິ່ນບອກວ່າ ຄຣິດສະຕຽນບໍ່ຄວນເຮັດຄືເດັກນ້ອຍທີ່ຫັນເຫໄປມາດ້ວຍ ລົມປາກຂອງຄຳສັ່ງສອນທຸກຢ່າງ. ທັງພວກຄຣິດສະຕຽນແລະຜູ້ນຳຄວນຮູ້ຈັກວິທີວັດຜົນເພື່ອສັງເກດ ຮູ້ສິ່ງດີ ແລະສິ່ງຊົ່ວ. ວິທີວັດຜົນຫຼັກຄຳສອນເປັນປະໂຫຍດຢ່າງໃດໃນຄຣິດສະຕະຈັກ? ________________________________

________________________________________________

**7** ເຮົາຈະຮູ້ແຍກສິ່ງດີຈາກສິ່ງຊົ່ວດ້ວຍວິທີໃດ? ________________________________

**8** ໃຫ້ອ່ານ ມັດທາຍ 16:5-6 ໃນເມື່ອເວລານັ້ນພະອົງເດີນທາງໄປກາຍຊາເລຍຟີລິບປອຍ. ພະອົງພົບພວກຟາລີຊາຍ ແລ້ວພະອົງເຕືອນພວກສາວົກເລື່ອງ ______________ ຂອງພວກ __________________ ແລະພວກ ________________________ . (ຕື່ມຄວາມທີ່ຂາດ)

**9** ໃນມັດທາຍ 16:12 ຄຳວ່າ "ເຊື້ອແປ້ງ" ປຽບທຽບຫຍັງ? ________________________

________________________________________________

**10** "ເຊື້ອແປ້ງຂອງພວກຟາລີຊາຍ" ອ້າງເຖິງຫຼັກຄຳສອນທີ່ເຂົາຕື່ມໃສ່ພະທຳ ຄືຄຳສອນທີ່ຕົກທອດມາຈາກເຖົ້າເກົ່າບູຮານ. ຖ້າເຮົາຈະຫຼີກເວັ້ນຈາກຄຳສອນບໍ່ຈິງ ເຮົາຕ້ອງຮູ້ວິທີແຍກລະຫວ່າງຄວາມຈິງແລະຄວາມບໍ່ຈິງ. ເຮົາຕ້ອງສາມາດໃຊ້ວິທີໃດ? ________________

**11** ໃນສະໄໝນັ້ນພວກຢິວຖືວ່າພວກຟາລີຊາຍຖືສາດສະໜາເຄັ່ງຄັດກວ່າໝູ່ ປະຊາຊົນບໍ່ກ້າຈະຕິຕຽນເຂົາແລະເຖິງ ຈະເປັນສາວົກຂອງພະອົງກໍຕາມ ເຂົາເຫັນວ່າບໍ່ສົມຄວນຈະວັດຜົນຜູ້ທີ່ມີກຽດປານນັ້ນ. ເຂົາເຮັດຄືເປັນຄົນຊອບທຳຫຼາຍແທ້ໆ ແຕ່ທີ່ຈິງເຂົາສອນຢ່າງຜິດພາດຫຼາຍປະການເຂົາອາດຈະບໍ່ສັງເກດຄວາມຜິດຂອງຕົນເອງ.
ກ. ໃນ ມທ 23:2 ເຂົາເຄີຍມີຕຳແໜ່ງໃດ? ________________________________
ຂ. ສະແດງວ່າ ພວກຢິວຖືວ່າ ພວກຟາລີຊາຍຕິດຕາມພະບັນຍັດຂອງໂມເຊຢ່າງຖືກຕ້ອງ. ເຂົາມັກໃຫ້ມະນຸດ ເອີ້ນເຂົາວ່າຢ່າງໃດ? (ມທ 23:7) __________________________

**12** ໃຫ້ອ່ານ ມັດທາຍ 23:3-7 ພະເຍຊູບອກວ່າ ພວກຟາລີຊາຍເຄີຍບອກໄວ້ແຕ່ບໍ່ເຮັດຕາມ. ໃນ ມທ 23:5 ສິ່ງທີ່ເຂົາ ເຮັດກໍເຮັດເພື່ອຫຍັງ? ______________________________

**13** ແອບບັນຈຸທີ່ເຂົາຖືຕິດຕົວໄວ້ເປັນຫຍັງ? (ອ່ານຂໍ້ອ້າງລຸ່ມໜ້າ 81 ໃນພະຄຳພີໃໝ່ທີ່ຕໍ່ລົງຈາກ ມທ 23:5) ______________________________________________

________________________________________________

**14** ເຖິງພວກຟາລີຊາຍເຄີຍຖືຂໍ້ພະຄຳພີຕິດຕົວກໍຕາມ ແຕ່ເຂົາເຄີຍຟັງຄວາມພະຄຳພີໃນການກະທຳທຸກວັນບໍ່?

**15** ຄຳສອນຂອງຟາລີຊາຍແລະນັກທຳເຄັ່ງຄັດ ແລ້ວປະກອບດ້ວຍແຕ່ຂໍ້ຫ້າມ. ເຂົາບໍ່ສົນໃຈໃນການເຊື່ອຟັງຄວາມຂອງ ພະເຈົ້າ ເຂົາສົນໃຈແຕ່ຢາກໃຫ້ໃຜເຫັນ?

**16** ພວກຟາລີຊາຍຕີຄວາມໝາຍໃນພະທຳອົບພະຍົບ 13:9 ຕາມຕົວອັກສອນແທ້. ເຂົາຖືແອບບັນຈຸນັ້ນໄວ້ເພື່ອໃຫ້ຜ ເຫັນ?

**17** ເຂົາມັກນັ່ງບ່ອນໃດ? (ມທ 23:6)

**18** ກ. ໃນ ມທ 23:12 ຜູ້ໃດຍົກຕົວຂຶ້ນຈະເປັນຢ່າງໃດ?

ຂ. ຜູ້ທີ່ຖ່ອມຕົວລົງຈະຖືກຫຍັງ?

**19** ກ. ພວກຟາລີຊາຍຖືຫຍັງໃສ່ໜ້າຜາກກັບແຂນສອກໄວ້?

ຂ. ເຂົາມັກນັ່ງບ່ອນໃດ?

ຄ. ເຂົາເຮັດຢ່າງນັ້ນເພື່ອຫຍັງ?

**20** ພວກພະອາຈານເຫຼົ່ານັ້ນ ຢາກແຕ່ໃຫ້ມະນຸດເຫັນຄ້າຍຄືວ່າເຂົາມີໜ້າກາກຄົນສົນທຳ ຄືເປັນຄົນໜ້າຊື່ໃຈຄົດ. ພະເຢຊູ ໃຊ້ວິທີຮຽນຢ່າງໃດຈຶ່ງຈະສັງເກດຄວາມໜ້າຊື່ໃຈຄົດຂອງພວກຟາລີຊາຍ?

**21** ເຮົາຈະວັດຜົນໄດ້ດ້ວຍຫຍັງ? (ເລືອກ)

ກ. ຈິດໃຈ. ຂ. ກຳລັງ. ຄ. ຄວາມຄິດ.

**22** ການວັດຜົນອາດຈະຍາກກວ່າວິທີຮຽນອື່ນໆ ນັ້ນ ແຕ່ພະເຈົ້າສາມາດໂຜດປະທານຄວາມສາມາດໃນສິ່ງນັ້ນໄດ້. ເຖິງ ທ່ານຜູ້ຮຽນອາດຈະບໍ່ສັງເກດກໍຕາມ ແຕ່ເຮົາເຄີຍວັດຜົນຫຼາຍເທື່ອໃນການຮຽນນີ້.

ກ. ເຮົາຕ້ອງໃຊ້ວິທີວັດຜົນເພື່ອຈະແຍກລະຫວ່າງສອງຢ່າງໃດ?

ຂ. ເຮົາວັດຜົນດ້ວຍ ຄວາມຄິດ, ກຳລັງ, ຫຼືຈິດໃຈ?

**23** ກ. ພວກຟາລີຊາຍສະແດງຄວາມອວດຕົວດ້ວຍຖືຫຍັງ?

ຂ. ແລະດ້ວຍຢາກນັ່ງບ່ອນໃດ?

ຄ. ເຂົາກະທຳຢ່າງນັ້ນເພື່ອຫຍັງ?

*ເຮົາຈະຮຽນວິທີວັດຜົນອີກໃນບົດຮຽນຕໍ່ໄປ. ຕໍ່ໄປໃນບົດນີ້ເຮົາຈະຮຽນເລື່ອງ ໂຄງຮ່າງທີ່ພະອົງວັດຜົນພວກ ຟາລີຊາຍ.*

**24** ໃຫ້ທ່ານຕຽມຕົວອ່ານ ມທ 23:1-36 ທັງໝົດເພື່ອຮູ້ໝົດເລື່ອງ ແຕ່ກ່ອນຈະອ່ານໃຫ້ສັງເກດດັ່ງຕໍ່ໄປນີ້:

* 1-12 ເປັນຄຳນຳ.

* 13:36 ແຍກເປັນ 7 ສ່ວນ.

* ແຕ່ລະສ່ວນເລີ້ມຕົ້ນດ້ວຍຄຳວ່າ "ວິບັດແກ່ເຈົ້າພວກນັກທຳແລະພວກຟາລິຊາຍ"

ໃນເມື່ອທ່ານຈະອ່ານໃຫ້ຄົ້ນພົບໂຄງຮ່າງດີໆ ຢ່າຟ້າວຟັ່ງອາດຈະຕ້ອງອ່ານໄປຫຼາຍເທື່ອ. ຢ່າຟ້າວເບິ່ງຄຳຕອບ ກ່ອນທ່ານຈະພົບໂຄງຮ່າງເອົາເອງ ເນີ!

ກ. ໃນແຕ່ລະສ່ວນເລີ້ມຕົ້ນດ້ວຍຄຳໃດ? ____________________

ຂ. ຫົວເລື່ອງບົດ 23 ນີ້ເວົ້າເຖິງຄົນຢ່າງໃດ? ____________________

| ໃຫ້ທ່ານຂີດສີຟ້າກ້ອງຄຳວ່າ "ວິບັດແກ່ເຈົ້າພວກນັກທຳແລະພວກຟາລິຊາຍ" ທັງ 7 ບ່ອນ. ໃນບ່ອນທີ່ເຫັນຄຳວ່າ "ໜ້າຊື່ໃຈຄົດ" ໃຫ້ຂີດເສັ້ນອ້ອມ. |
|---|

**25** ທຸກເທື່ອທີ່ພະອົງເວົ້າວ່າ "ວິບັດແກ່ເຈົ້າ ພວກນັກທຳແລະພວກຟາລິຊາຍ" ນັ້ນ ພະອົງເຄີຍຍົກສາເຫດຕໍ່ໄປ. ເປັນ ຫຍັງພະອົງຈິ່ງຍົກສາເຫດມາທຸກເທື່ອ? (ເລືອກ)

ກ. ເພື່ອຊີ້ບອກວ່າຄຳສັ່ງສອນຂອງເຂົາ ບໍ່ເຂົ້າກັບການກະທຳຂອງເຂົາ.

ຂ. ເພື່ອຊີ້ບອກວ່າຄຳສອນຂອງເຂົາບໍ່ຖືກ.

ຄ. ເພື່ອຊີ້ບອກວ່າພະອົງບໍ່ເຫັນຜິດນຳເຂົາ.

**26** ພະເຢຊູຊີ້ບອກຄວາມໜ້າຊື່ໃຈຄົດໃນຈັກປະການ? ____________________

*ພະເຢຊູ ສະເໜີຄວາມຜິດຂອງພວກນັກທຳແລະພວກຟາລິຊາຍ 7 ປະການ. ຕໍ່ໄປນີ້ເຮົາຈະຮຽນເທື່ອລະປະການ*

## ຄວາມຜິດປະການທີ 1

**27** ໃຫ້ອ່ານ ມທ 23:13 ຄວາມຜິດນີ້ກ່ຽວເລື່ອງລາຊະແຜ່ນດິນສະຫວັນ. ຄວາມຜິດນັ້ນມີຢູ່ສອງແງ່.

ກ. ພວກຟາລິຊາຍເອງເຂົ້າໄປບໍ່? ____________________

ຂ. ເມື່ອຄົນອື່ນຈະເຂົ້າໄປພວກຟາລິຊາຍເຮັດຫຍັງ? ____________________

**28** ບໍ່ແມ່ນພຽງແຕ່ພວກຟາລິຊາຍບໍ່ຍອມຮັບຢ່າງດຽວເຂົາຫ້າມບໍ່ໃຫ້ຜູ້ອື່ນເຂົ້າໄປ. ເຂົາມັກເອົາພະທຳຂອງພະເຈົ້າມາຕື່ມ ໃສ່ຄຳສອນທີ່ຕົກທອດມາຈາກບູຮານອີກທີ່ຕົນເອງຖືບໍ່ໄດ້. ສ່ວນທີ່ເຂົາຖືນັ້ນກໍຖືໄວ້ເພື່ອໃຫ້ໃຜເຫັນ? ____________________

**29** ພວກຟາລິຊາຍເອົາຫຍັງມາບັງໜ້າ? (ເລືອກ)

ກ. ສາດສະໜາຢິວ. ຂ. ຄວາມຮັກ. ຄ. ຫຼັກຄຳສອນຂອງພະເຢຊູ.

**30** ກ່ຽວເລື່ອງກັບແຜ່ນດິນສະຫວັນ ເຂົາຫຼົງຜິດໃນສອງດ້ານໃດ?

______________________________ ແລະ ______________________________

## ຄວາມຜິດປະການທີ 2



**31** ໃຫ້ອ່ານ ມທ 23:14. ມາລະໂກ 12:40 ແລະ ລູກາ 20:47 ກ່າວເລື່ອງດຽວ ແຕ່ຫຼັງຈາກສອງຂໍ້ນັ້ນພະອົງ ເວົ້າເລື່ອງເງິນຖະຫວາຍ ຂອງຍິງໝ້າຍ. ແມ່ນໃຜຊອບ ທຳຫຼາຍກວ່າ ພວກຟາລິຊາຍ ຫຼື ຍິງໝ້າຍນັ້ນ?

____________________________________

**32** ພວກຟາລິຊາຍເຄີຍເຮັດຢ່າງໃດຕໍ່ພວກແມ່ໝ້າຍ?

____________________________________

____________________________________



**33** ທີ່ພະເຢຊູບອກວ່າເຂົາກືນກິນຄອບຄົວຂອງແມ່ໝ້າຍມີ ຄວາມໝາຍວ່າຢ່າງໃດ? (ເລືອກ)

ກ. ເຂົາໃຊ້ສິດຈິ່ງຈະໄດ້ສິ່ງຂອງຂອງແມ່ໝ້າຍນັ້ນ.

ຂ. ເຂົາຈະເອົາລູກຂອງແມ່ໝ້າຍໄປຕຳກິນ.

ຄ. ເຂົາຈະມ້າງເຮືອນແມ່ໝ້າຍ.

**34** ເຂົາແກ້ງໄຫວ້ວອນຢ່າງໃດ? ________________

**35** ກ. ໃນບົດຮຽນກ່ອນໆນັ້ນເຮົາຮຽນມາແລ້ວວ່າອັນນາທີ່ເປັນມະຫາ ປະໂລຫິດຈັດການຄ້າຂາຍ ໃນເດີ່ນໃດ? ______________________________________________

ຂ. ເຊັ່ນດຽວກັນ ພວກນັກທຳແລະພວກຟາລິຊາຍສົນໃຈຢາກໄດ້ຫຍັງ?______________

**36** ໃຫ້ອ່ານ ມາລະໂກ 12:41-44.

ກ. ໃນສາຍຕາຂອງພະເຈົ້າແມ່ນຜູ້ໃດໃຫ້ຫຼາຍທີ່ສຸດ? _________________________

ຂ. ແຕ່ເຖິງຍິງໝ້າຍຄົນນັ້ນຖະຫວາຍເງິນຈົນໝົດເພື່ອໃຊ້ໃນພະວິຫານເຈົ້າໜ້າທີໃນພະວິຫານ ແມ່ນຢ່າງໃດ? ______________________________________________

**37** ທີ່ພະເຢຊູວັດຜົນກ່ຽວກັບພວກຟາລິຊາຍເທື່ອທີສອງນີ້ ພະອົງສັງເກດວ່າ ເຂົາເຮັດສອງຢ່າງ ພ້ອມກັນຄື ໄຫວ້ວອນຍືດ ຍາວແລະກືນກິນຄອບຄົວຂອງແມ່ໝ້າຍ.

ກ. ທີ່ຈິງເຂົາຕ້ອງການຢາກໄດ້ຫຍັງ?

______________________

ຂ. ເຂົາແກ້ງເຮັດຫຍັງ? ________

______________________



**38** ການວັດຜົນຄົນໜ້າຊື່ໃຈຄົດຍາກຫຼາຍ ເພາະເຂົາມັກແຕ່ບັງຄວາມຜິດໄວ້.

ກ. ພວກຟາລີຊາຍຢາກບັງການຫຍັງໄວ້? ______________________________

ຂ. ບັງໄວ້ດ້ວຍເຮັດຫຍັງ? ________________________________________

**39** ກ. ເຮົາຮຽນວິທີວັດຜົນເພື່ອຈະສາມາດແຍກຫຍັງກັນໄວ້? _________ ແລະ _________

ຂ. ໃນຕົວເຮົາເອງເຮົາຈະວັດຜົນດ້ວຍສ່ວນໃດ? ___________________________

## **ຄວາມຜິດປະການທີ 3**

**40** ໃຫ້ອ່ານ ມທ 23:15-22 ເຂົ້າໃຈດີບໍ່? ________________________________

**41** ພວກຟາລີຊາຍເຄີຍເຜີຍແຜ່ສາດສະໜາອອກໄປທົ່ວທຸກບ່ອນ. ເຂົາເຜີຍແຜ່ໄປຈົ່ງຈະມີຄົນເຂົ້າສາດສະໜາໃດ?____________________________________________

**42** ພະເຢຊູບໍ່ຕິຄົນເຂົ້າສາດສະໜາຢິວ ພະເຢຊູຕິແຕ່ຄົນທີ່ເຂົ້ານັ້ນບໍ່ກາຍເປັນລູກສິດຂອງພະເຈົ້າ ແຕ່ເຂົາກາຍເປັນ ລູກສິດຂອງພວກຟາລີຊາຍ. ຕໍ່ໄປຄົນທີ່ເຂົ້າສາດສະໜາໃໝ່ຈະເປັນຄົນໜ້າຊື່ໃຈຄົດເໝືອນຢ່າງກັບຟາລີຊາຍຄົນ ອື່ນໆໃນ ມທ 23:15 ພະເຢຊູບອກວ່າເຂົາເຮັດໃຫ້ຄົນເຂົ້າໃໝ່ນັ້ນສົມກັບຫຍັງ? ________________________________________

**43** ກ. ໃນ ມທ 23:16 ພະເຢຊູບອກວ່າເຂົາເປັນນາຍທາງຢ່າງໃດ? _________________

ຂ. ໃຫ້ກັບໄປອ່ານ ມທ 15:14. ຖ້າຄົນຕາບອດຈູງຄົນຕາບອດໄປຈະເປັນຢ່າງໃດ? ______

_______________________________________________________

**44** ການນັ້ນອາດຈະເປັນບົດຮຽນໃຫ້ເຮົາໃນທຸກມື້ນີ້ດ້ວຍ.

ກ. ຖ້າເຮົາຢາກແຕ່ນຳສະມາຊິກມາເຂົ້າກັບຄຼິດສະຕະຈັກຂອງເຮົາແທນທີ່ຈະໃຫ້ເຂົາໄວ້ວາງໃຈໃນພະເຢຊູ ຈະຄວນບໍ່? ____________________________________

ຂ. ສິ່ງສຳຄັນທີ່ສຸດບໍ່ແມ່ນວ່າຈະໃຫ້ເຂົາມາເປັນສະມາຊິກໃນຄຼິດສະຕະຈັກຂອງເຮົາ. ສຳຄັນທີ່ສຸດທີ່ຈະເກີດເປັນລູກ ຂອງ ___________________________ . (ຕື່ມຄວາມຂາດ)

**45** ພະເຢຊູວັດຜົນວ່າພວກຟາລີຊາຍທີ່ຢາກໃຫ້ຜູ້ທີ່ເຂົ້າສາດສະໜາຂອງພວກຟາລີຊາຍດ້ວຍກັນກັບເຂົາ ເໝືອນຢ່າງກັບ ນາຍທາງໃດ? ________________________________

**46** ຄວາມຜິດປະການທີ 3 ຄື ເຂົາທ່ຽວທາງນ້ຳແລະທາງບົກທົ່ວໄປເພື່ອຈະໃຫ້ແມ່ນແຕ່ _____ ເຂົ້າສາດສະໜາແຕ່ ເມື່ອໄດ້ແລ້ວພວກເຂົາກໍເຮັດໃຫ້ຄົນນັ້ນສົມກັບ _______________ ຫຼາຍກວ່າເຂົາເອງເຖິງສອງທໍ່. (ຕື່ມຄວາມ)

**47** ໃນມທ 23:16-22 ມີຕົວຢ່າງອີກຫຼາຍປະການເລື່ອງການສອນຂອງພວກຟາລີຊາຍ ທີ່ເຂົາບໍ່ສັງເກດຄວາມຈິງດ້ານ ວິນຍານ. ຕາເຂົາເຫັນວັດຖຸສິ່ງຂອງໄດ້ດີ ແຕ່ດ້ານວິນຍານເຂົາເປັນຢ່າງໃດ? ______________________________________________

**48** ຄຳສອນທີ່ເນັ້ນຄຳຈຸດນ້ອຍທີ່ບໍ່ສຳຄັນ ແຕ່ບໍ່ສັງເກດຮັບຮູ້ຫຼັກໃຫຍ່ທີ່ສຳຄັນມີລັກສະນະເໝືອນຄົນຕາບອດ.ນັກເທດຄົນ ໃດ ຕໍ່ໄປນີ້ທີ່ຕົກໃນຄວາມຜິດຄ້າຍຄືກັນກັບພວກຟາລີຊາຍ:

ກ. ______ ຜູ້ທີ່ອະທິບາຍພະທຳ ແລະດຳເນີນຊີວິດຢ່າງຖືກຕ້ອງ.

ຂ. ______ ນັກເທດທີ່ມັກແຕ່ເນັ້ນຄຳຈຸດນ້ອຍໆ ເພື່ອບັງຄວາມບໍ່ຮູ້ໃນເລື່ອງສຳຄັນໄວ້.

ຄ. ______ ຜູ້ທີ່ເທດສະໜາເລື່ອງນະໂຍບາຍຂອງຄຼິດສະຕະຈັກຢູ່ສະເໝີ.

ງ. ______ ຜູ້ທີ່ສອນແຕ່ເລື່ອງຄຳທຳນວາຍຈາກພະຄຳພີທີ່ບໍ່ສຳເລັດເທື່ອແທນທີ່ຈະສອນກ່ຽວກັບຫຼັກສຳຄັນ.

ຈ. ______ ຜູ້ທີ່ເທດສະໜາເລື່ອງຫຼັກສຳຄັນໃນພະຄຳພີທົ່ວໄປ.

## ຄວາມຜິດປະການທີ 4

**49** ໃຫ້ອ່ານ ມທ 23:23-24 ເຂົາເນັ້ນໜັກສິ່ງນ້ອຍໆ ແຕ່ບໍ່ເຫັນສິ່ງສຳຄັນ.

ກ. ເຂົາແບ່ງສ່ວນສິບຖະຫວາຍສິ່ງໃດ? __________ __________ ແລະ ________

ຂ. ແຕ່ມີຂໍ້ສຳຄັນໃດໃນພະບັນຍັດທີ່ເຂົາບໍ່ຖືປະຕິບັດ? ________________________

____________________________ ແລະ ____________________________

**50** ກ. ທີ່ຈິງເຂົາບໍ່ສົນໃຈໃນເລື່ອງຫຼັກສຳຄັນໃນພະບັນຍັດ ແຕ່ເຂົາເອົາຫຍັງມາບັງໜ້າໄວ້?

____________________________________________________________

ຂ. ເຂົາຂາດບໍ່ຫ່ວງສິ່ງສຳຄັນໃດ? ______________________________________

**51** ໃນ ມທ 23:24 ພະເຍຊູຍົກຕົວຢ່າງສອງປະການ

ກ. ເຂົາຕອງຫຍັງອອກຈາກນ້ຳກິນ? _____________________________________

ຂ. ເຂົາກືນຫຍັງທັງໂຕ? ___________________________________________

**52** ເຂົາເຄີຍຕອງນ້ຳດື່ມທຸກຊະນິດເພື່ອຈະບໍ່ກິນຂອງສົກກະປົກດ້ວຍບໍ່ສັງເກດຈິ່ງຈະບໍ່ຜິດກັບຄຳສອນທີ່ຕົກທອດມາ ຈາກເຖົ້າເກົ່າບູຮານ. ໃຫ້ທ່ານສັງເກດຂໍ້ 23 ແລະ 24 ຮ່ວມກັນ.

ກ. ການຕອງແມງມີ້ອອກສະແດງວ່າເຂົາເບິ່ງສິ່ງນ້ອຍທີ່ສຸດມາເປັນສ່ວນ _____________ ເພື່ອຖະຫວາຍ ໃນພະວິຫານ. (ຕື່ມຄວາມທີ່ຂາດ)

ຂ. ການກືນໂອດໂອທັງໂຕສະແດງວ່າເຂົາບໍ່ຖືຂໍ້ພະບັນຍັດສຳຄັນກ່ຽວກັບຫຍັງ? ________

____________________________________________________________

**53** ໃຫ້ທ່ານອະທິບາຍຄວາມໝາຍໃນ ມທ 23:24 ເລື່ອງຕົວຢ່າງທີ່ພະອົງຍົກມາ.
(ໃຫ້ອະທິບາຍຢ່າງເປັນກັນເອງ)

______________________________________________________________

______________________________________________________________

______________________________________________________________

## ຄວາມຜິດປະການທີ 5

**54** ໃຫ້ອ່ານ ມັດທາຍ 23:25-26. ຄວາມຜິດປະການທີ 5 ແລະ 6 ນີ້ໄດ້ຮຽນມາກ່ອນ. ໃນ ມທ 23 ຂໍ້ 25 ແລະ 26 ພະ ອົງຍົກຕົວຢ່າງເລື່ອງຖ້ວຍຊາມ.
ກ. ຂ້າງໃນເປັນຢ່າງໃດ? ______________________________
ຂ. ຂ້າງນອກເດ? ______________________________

**55** ກ. ໃນຖ້ວຍຊາມນັ້ນຂ້າງໃດສະແດງເຖິງການປາກົດຕົວຂອງພວກຟາລິຊາຍ? __________
ຂ. ຂ້າງໃດສະແດງເຖິງຄວາມຜິດລັບໆ? ______________________________
ຄ. ແມ່ນຂ້າງໃດທີ່ເປື້ອນ? ______________________________
ງ. ຂ້າງໃດສະອາດ? ______________________________

## ຄວາມຜິດປະການທີ 6

**56** ໃຫ້ອ່ານ ມທ 23:27-28 ຊາດຢິວໃນເຂດເຢລູຊາເລັມເຄີຍປະດັບປະດາປ່າຊ້າກ່ອນເທດສະການປັດສະຄາ. ເຂົາ ເອົາປູນຂາວມາທາອຸບໂມງຝັງສົບໃຫ້ງາມຕາ.
ກ. ເຂົາເຮັດຫຍັງກັບອຸບໂມງກ່ອນປັດສະຄາ? ______________________________
ຂ. ຂ້າງໃນອຸບໂມງນັ້ນເປັນຢ່າງໃດ? ______________________________

**57** ກ. ອຸບໂມງທີ່ງົດງາມຂາວດີ ຂ້າງນອກປຽບເຖິງໜ້າຊື່ຫຼືໃຈຄິດ? __________________
ຂ. ຂ້າງໃນທີ່ເຕັມໄປດ້ວຍກະດູກຄົນຕາຍແລະສາລະພັດຂີ້ດຽດປຽບເຖິງອັນໃດ? ________

ຄວາມຜິດປະການທີ 7

**58** ໃຫ້ອ່ານ ມທ 23:29-36. ພວກຟາລິຊາຍມັກອວດຕົວວ່າເຂົາຖືພະບັນຍັດມາຈາກສະໄໝເຖົ້າເກົ່າບູຮານ, ແຕ່ເຂົາບອກວ່າຖ້າເຂົາຢູ່ໃນສະໄໝບັນພະບຸລຸດເຂົາຈະບໍ່ມີສ່ວນໃນການໃດ? (ຂໍ້ 30) ______________________________

**59** ໃນຂໍ້ 31 ພະເຍຊູບອກພວກຟາລິຊາຍນັ້ນວ່າ ເຂົາກໍຮັບຮູ້ວ່າແມ່ນບັນພະບຸລຸດຂອງເຂົາທີ່ຂ້າພວກຜູ້ປະກາດພະທຳ. ການນັ້ນສະແດງວ່າຢ່າງໃດ? (ເລືອກ)
ກ. ພວກຟາລິຊາຍຮັບຜິດພ້ອມກັນກັບບັນພະບຸລຸດນັ້ນ.
ຂ. ພວກຟາລິຊາຍຄວນຈະຮຽນຮູ້ບໍ່ຫຼົງຜິດເໝືອນຢ່າງກັບບັນພະບຸລຸດເຫຼົ່ານັ້ນ.

ຄ. ພວກຟາລີຊາຍບໍ່ຮ້າຍປານບັນພະບຸລຸດເຂົາ.

**60** ໃນ ມທ 23:34 ພະເຢຊູບອກວ່າເຂົາຈະຂ້າແລະຂົ່ມເຫັງພວກໃດ? ________________

**61** ໃນມທ 23:29 ເຂົາສ້າງອຸບໂມງ ແລະຕົກແຕ່ງທາດຂອງໃຜ? ___________________

**62** ແມ່ນພວກຜູ້ທຳນວາຍໃດທີ່ຍັງຈະກ່າວພະຄຳຂອງພະເຈົ້າໄດ້? (ເລືອກ)

ກ. ຜູ້ທຳນວາຍທີ່ຕາຍແລ້ວ. ຂ. ຜູ້ທຳນວາຍທີ່ຍັງມີຊີວິດຢູ່. ຄ. ຜູ້ທຳນວາຍທີ່ບໍ່ໄດ້ເກີດເທື່ອ.

**63** ຜູ້ປະກາດພະທຳທີ່ຕາຍແລ້ວບໍ່ລົບກວນໃຜອີກ. ທີ່ຈະນັບຖືຄົນຕາຍແລ້ວເປັນການງ່າຍ ແຕ່ເຂົາບໍ່ຢາກຮັບຮູ້ຜູ້ປະ ກາດພະທຳທີ່ຍັງມີຊີວິດຢູ່,ເຂົາຢາກຊິງໃຫ້ໄປຢູ່ກັບເຫຼົ່າຜູ້ປະກາດທີ່ລົບກວນເຂົາບໍ່ໄດ້. ດັ່ງນັ້ນເຂົາຈະຄຶງພະເຢຊູໄວ້ໃສ? ____________________________

**64** ມະນຸດມັກແຕ່ນິຍົມ ແລະໃຫ້ກຽດແກ່ຜູ້ປະກາດໃນອາດີດ ແຕ່ບໍ່ຢາກຟັງຄວາມຂອງຜູ້ປະກາດພະທຳທີ່ຍັງມີຊີວິດຢູ່. ມະນຸດເຮົາບໍ່ມັກຄົນທີ່ມາຊີ້ບອກຜິດຂອງເຮົາ. ທຳມະດາຄົນເຮົາຫ່ວງຜູ້ປະກາດທີ່ລັບຕາລາໂລກໄປ ຫຼືຫ່ວງຜູ້ປະກາດ ທີ່ຍັງມີຊີວິດຫຼາຍກວ່າ ______________

_____________________________________________________________

**65** ກ. ການສ້າງອຸບໂມງຂອງພວກຜູ້ປະກາດພະທຳ ເປັນການບັງໜ້າຊື່ ຫຼືຄວາມຊົ່ວທີ່ອຳໄວ້?

_____________________________________________________________

ຂ. ການຂ້າຜູ້ປະກາດພະທຳເດ? ________________________________________

*ພວກຟາລີຊາຍກ່າວຫາບັນພະບຸລຸດເຂົາທີ່ຂ້າຜູ້ປະກາດພະທຳໃນສະໄໝນັ້ນ ພວກເຮົາກ່າວຫາເຂົາທີ່ຂ້າພະເຢ ຊູເຊັ່ນດຽວກັນ. ພວກເຮົາຈຶ່ງລະວັງຕົວຢ້ານວ່າເຮົາຈະບໍ່ຮັບຟັງຜູ້ປະກາດພະທຳໃນສະໄໝນີ້! ໃຫ້ທ່ານຕຽມຕົວ ແລກປ່ຽນຄວາມຄິດເຫັນກັບໝູ່ໃນປະຊຸມຂ້າງໜ້າ.*

**66** ກ. ພວກຟາລີຊາຍມັກອວດຕົວດ້ວຍຖືສິ່ງໃດກັບຕົວ? __________________________

ຂ. ເຂົາຢາກນັ່ງບ່ອນໃດ? ____________________________________________

ຄ. ຢາກໃຫ້ຄົນຮ້ອງເຂົາວ່າຢ່າງໃດ? _____________________________________

**67** ເຂົາມັກມີກຽດປານນັ້ນເພື່ອຫຍັງ? _____________________________________

**68** ໃຫ້ອ່ານ ມັດທາຍ 24:1.

ກ. ພະເຢຊູປະນາມພວກຟາລີຊາຍກ່ອນຈະອອກຈາກພະວິຫານ ຫຼືຫັງ? ___________

ຂ. ເຫດການເຫຼົ່ານັ້ນເກີດມີຂຶ້ນໃນພະວິຫານວັນໃດ? __________________________

**69** ໃຫ້ທ່ານເອົາໜ້າຊື່ທີ່ສະແດງອອກໃນຂ້າງຊ້າຍມາຈັບຄູ່ກັບຄວາມຜິດທີ່ບັງໄວ້ຂ້າງຂວາ:

| | |
|---|---|
| ກ. _____ ທາປູນຂາວຂ້າງນອກ | 1. ກົນກິນຄອບຄົວຂອງແມ່ໝ້າຍ. |
| ຂ. _____ ສະອາດຂ້າງນອກ | 2. ໃຫ້ຄົນເຂົ້າສາດສະໜາລືມກັບນະຣົກ. |
| ຄ. _____ ສ້າງອຸບໂມງຂອງຜູ້ປະກາດພະທຳ | 3. ຂອງເປື້ອນຂ້າງໃນ. |

ງ. _____ ໄຫວ້ວອນຍາວ

ຈ. _____ ຖືຄຳສອນຈາກເຖົ້າເກົ່າບູຮານ

ສ. _____ ທ່ຽວໄປເພື່ອຈະໃຫ້ຄົນເຂົ້າສາດສະໜາ

ຊ. _____ ຖະຫວາຍສ່ວນສິບ

4. ປະຄວາມຍຸດຕິທຳຄວາມເມດຕາແລະຄວາມສັດຊື່.

5. ບໍ່ເຂົ້າແຜ່ນດິນສະຫວັນແລະບໍ່ໃຫ້ຜູ້ອື່ນເຂົ້າໄປ.

6. ຂ້າແລະຂົ່ມເຫງຜູ້ປະກາດພະທຳໃນສະໄໝນັ້ນ.

7. ມີກະດູກຄົນຕາຍຂ້າງໃນ.

**70** ກ. ພວກຟາລິຊາຍບັງໜ້າການກືນກິນຄອບຄົວຂອງແມ່ໝ້າຍດ້ວຍເຮັດຫຍັງ? __________

______________________________________________________________

ຂ. ທີ່ເຂົາເຮັດໃຫ້ຄົນເຂົ້າສາດສະໜາສົມກັບນະຣົກ ເຂົາບັງໜ້າໄວ້ຢ່າງໃດ? __________

______________________________________________________________

ຄ. ເຄື່ອງທີ່ເປື້ອນຂ້າງໃນກໍ່ບັງໜ້າໄວ້ຢ່າງໃດ? ______________________________

ງ. ອຸບໂມງທີ່ເຕັມໄປດ້ວຍກະດູກຄົນຕາຍເດ? ______________________________

ຈ. ການຂ້າແລະຂົ່ມເຫງຜູ້ປະກາດພະທຳ? ______________________________

ສ. ການບໍ່ເຂົ້າແລະບໍ່ໃຫ້ຜູ້ອື່ນເຂົ້າແຜ່ນດິນສະຫວັນ? ___________________________

ຊ. ການປະຄວາມຍຸດຕິທຳຄວາມເມດຕາແລະຄວາມສັດຊື່ບັງໄວ້ຢ່າງໃດ? ___________

______________________________________________________________

**71** ກ. ທີ່ເຂົາສ້າງອຸບໂມງຂອງຜູ້ປະກາດພະທຳບັງຄວາມຜິດໃດໄວ້? _______________

______________________________________________________________

ຂ. ການລ້າງຖ້ວຍຊາມໃຫ້ສະອາດຂ້າງນອກບັງຫຍັງໄວ້? ______________________

ຄ. ການໄຫວ້ວອນໃຫ້ຍືດຍາວເດ? __________________________________

ງ. ທີ່ເຂົາທ່ຽວໄປທາງນ້ຳແລະທາງບົກເພື່ອຈະໃຫ້ຄົນເຂົ້າສາດສະໜາບັງຫຍັງ? ________

______________________________________________________________

ຈ. ການຖືຄຳສອນທີ່ຕົກທອດຈາກເຖົ້າເກົ່າບູຮານບັງຫຍັງໄວ້? __________________

______________________________________________________________

ສ. ການຖະຫວາຍສ່ວນສິບຢ່າງລະອຽດທີ່ສຸດບັງສິ່ງໃດ? _______________________

______________________________________________________________

ຊ. ການທາປູນຂາວເດ?__________________________________________

*ກ່ອນຈະຮ່ວມປະຊຸມຂ້າງໜ້າໃຫ້ທ່ານສຳນຶກດີໆ ເລື່ອງຄວາມຜິດຂອງພວກຟາລິຊາຍ ແລະເບິ່ງວ່າຄົນຄຼິດສະຕຽນ ໃນປັດຈຸບັນນີ້ເຄີຍຫຼົງຜິດໃນທຳນອງດຽວກັນຫຼືບໍ່? ຖ້າມີເຮົາຈະແກ້ຢ່າງໃດໄດ້? ຖ້າບໍ່ມີເທື່ອເຮົາຈະປ້ອງກັນບໍ່ໃຫ້ ມີ ຢ່າງໃດ? ໃຫ້ທ່ານຕຽມຕົວແລກປ່ຽນຄວາມຄິດເຫັນກັບໝູ່ໃນປະຊຸມ.*



## *ໃຫ້ເປີດໄປສອບເສັງ ບົດທີ 8!*

**ຄຳຕອບ:**

**1** *ກ. ວັນອັງຄານ. ຂ. ພະວິຫານ.*
*ຄ. ເລື່ອງລູກຊາຍສອງຄົນ ເລື່ອງສວນອະງຸ່ນແລະຄົນເຊົ່າ*
*ເລື່ອງພິທີອະພິເສກ.*
*ງ. ເລື່ອງການເສຍຊ່ວຍ. ເລື່ອງການຄືນມາຈາກຕາຍ.*
*ພະບັນຍັດຂໍ້ໃຫຍ່. ເລື່ອງບຸດດາວິດ.*

**2** *ກ. ຟາລີຊາຍ ແລະ ນັກທຳ. ຂ. ປະຊາຊົນ ແລະ ພວກສາວົກ.*

**3** *ຄວາມຈິງ ແລະ ຄວາມບໍ່ຈິງ (ສິ່ງດີ ແລະ ສິ່ງຊົ່ວກໍໄດ້)*

**4** *ວັດພົນ (ສັງເກດ)*

**5** *ກ. ໝາໄນ. ຂ. ຖ້າມກາງພວກເຂົາ. ຄ. ໃຫ້ຫຼົງຕາມເຂົາໄປ.*

**6** *ເພື່ອໃຫ້ພວກສິດແລະຜູ້ນຳສັງເກດຮູ້ຄວາມຈິງ ແລະ ຄວາມບໍ່ຈິງ. (ຄຳຄ້າຍຄືກັນກໍໄດ້)*

**7** *ວັດພົນ.*

**8** *ເຊື້ອແປ້ງ... ຟາລີຊາຍ... ຊາດູກາຍ.*

**9** *ຄຳສອນຂອງພວກຟາລີຊາຍແລະພວກຊາດູກາຍ.*

**10** *ວັດພົນ*

**11** *ກ. ເຄີຍນັ່ງບ່ອນນັ່ງຂອງໂມເຊ. ຂ. "ພະອາຈານ"*

**12** *ເພື່ອໃຫ້ມະນຸດເຫັນ.*

**13** *ກັບນ້ອຍໆເຮັດດ້ວຍໜັງ, ພາຍໃນມີຂໍ້ພິເສດຄັດເລືອກຈາກພະບັນຍັດກັບດັ່ງກ່າວຄົນຢິວເຄີຍຖືຕິດໜ້າຜາກ ກັບແຂນສອກໄວ້.*

**14** *ບໍ່*

**15** *ມະນຸດ.*

**16** *ມະນຸດ.*

**17** *ບ່ອນມີກຽດ.*

**18** *ກ. ຈະຖືກຖອຍລົງ. ຂ. ຈະຖືກຍົກຂຶ້ນ.*

**19** *ກ. ແອບບັນຈຸຂໍ້ພະຄຳພີ. ຂ. ບ່ອນມີກຽດ. ຄ. ໃຫ້ມະນຸດເຫັນ.*

**20** *ວິທີວັດພົນ.*

**ຄຳຕອບ (ຕໍ່):**

**21** *ຄ ຖືກ.*

**22** *ກ. ສິ່ງດີ ແລະ ສິ່ງຊົ່ວ. (ຄວາມຈິງ ແລະ ຄວາມຕົວະ) ຂ. ຄວາມຄິດ.*

**23** *ກ. ຖືແອບບັນຈຸຂໍ້ພະທຳ. ຂ. ບ່ອນມີກຽດ. ຄ. ໃຫ້ມະນຸດເຫັນ.*

**24** *ກ. "ວິບັດແກ່ເຈົ້າ ພວກນັກທຳແລະພວກຟາລິຊາຍ" ຂ. ຄົນໜ້າຊື່ໃຈຄົດ.*

**25** *ກ ຖືກ.*

**26** *7 ປະການ.*

**27** *ກ. ບໍ່ ຂ. ບໍ່ໃຫ້ເຂົ້າໄປ.*

**28** *ມະນຸດ.*

**29** *ກ ຖືກ*

**30** *ເຂົາເອງບໍ່ເຂົ້າໄປ ແລະ ບໍ່ໃຫ້ຄົນອື່ນເຂົ້າໄປ.*

**31** *ຍິງໝ້າຍ.*

**32** *ກົນກິນຄອບຄົວເຂົາ.*

**33** *ກ ຖືກ.*

**34** *ຍືດຍາວ.*

**35** *ກ. ເດີ່ນພະວິຫານ. ຂ. ເງິນ.*

**36** *ກ. ຍິງໝ້າຍ. ຂ. ເຂົາກິນແຮງພວກແມ່ໝ້າຍ. (ຄຳຄ້າຍຄືກໍໄດ້)*

**37** *ກ. ເງິນ. ຂ. ແກ້ງໄຫວ້ວອນໃຫ້ຍືດຍາວ.*

**38** *ກ. ການກົນກິນຄອບຄົວຂອງແມ່ໝ້າຍ (ຄຳຄ້າຍຄືກັນກໍໄດ້)*
*ຂ. ດ້ວຍໄຫວ້ວອນຍືດຍາວ.*

**39** *ກ. ສິ່ງດີ ແລະ ສິ່ງບໍ່ດີ. ຂ. ຄວາມຄິດ.*

**40** *(ຖ້າບໍ່ເຂົ້າໃຈດີ ໃຫ້ອ່ານໃໝ່ອີກ)*

**41** *ສາດສະໜາຢິວຂອງເຂົາ.*

**42** *ນະຮົກ*

**43** *ກ. ຕາບອດ ຂ. ເຂົາທັງສອງຈະຕົກໃນຂຸມ.*

**44** *ກ. ບໍ່ຄວນ ຂ. ພະເຈົ້າ*

**45** *ຕາບອດ*

**46** *ຄົນດຽວ... ນະຮົກ*

**47** *ຕາບອດ*

**48** *ຂ ຄ ງ*

**49** *ກ. ຜັກກ້ານກໍ່ ຜັກຊີ ແລະ ຂີ້ໝິ້ນ*
*ຂ. ຄວາມຍຸດຕິທຳ ຄວາມເມດຕາ ແລະ ຄວາມສັດຊື່*

**ຄຳຕອບ (ຕໍ່):**

**50** *ກ. ການຍົກຖະຫວາຍສິ່ງນ້ອຍທີ່ສຸດເປັນສ່ວນສິບ.*

*ຂ. ຄວາມຍຸດຕິທຳ ຄວາມເມດຕາ ແລະ ຄວາມສັດຊື່.*

**51** *ກ. ແມງມີ່. ຂ. ໂອດໂອ.*

**52** *ກ. ສິບ. ຂ. ຄວາມຍຸດຕິທຳ ຄວາມເມດຕາ ແລະ ຄວາມສັດຊື່.*

**53** *(ຄຳຕອບຂອງທ່ານອ້າງເຖິງການຖະຫວາຍສິ່ງທີ່ນ້ອຍທີ່ສຸດ ຮ່ວມນຳການເມີນເສີຍຫຼັກສຳຄັນ)*

**54** *ກ. ບໍ່ສະອາດ. ຂ. ສະອາດ.*

**55** *ກ. ຂ້າງນອກ ຂ. ຂ້າງໃນ ຄ. ຂ້າງໃນ ງ. ຂ້າງນອກ*

**56** *ກ. ທາປູນຂາວ ຂ. ມີກະດູກຄົນຕາຍ*

**57** *ກ. ໜ້າຊື່ ຂ. ໃຈຄົດ*

**58** *ໃນການຂ້າພວກຜູ້ປະກາດພະທຳ*

**59** *ກ ຖືກ*

**60** *ຜູ້ປະກາດພະທຳ (ນັກປາດ ນັກທຳ)*

**61** *ຜູ້ປະກາດພະທຳ (ຄົນສິນທຳ)*

**62** *ຂ ຖືກ*

**63** *ທີ່ໄມ້ກາງແຂນ*

**64** *ຜູ້ປະກາດທີ່ຍັງມີຊີວິດ*

**65** *ກ. ໜ້າຊື່ ຂ. ຄວາມຊົ່ວທີ່ອຳໄວ້*

**66** *ກ. ແອບບັນຈຸຂໍ້ພະທຳ ຂ. ບ່ອນມີກຽດ ຄ. ພະອາຈານ*

**67** *ເພື່ອໃຫ້ມະນຸດເຫັນ*

**68** *ກ. ກ່ອນ ຂ. ວັນອັງຄານ*

**69** *ກ. 7 ຂ. 3 ຄ. 6 ງ. 1 ຈ. 5 ສ. 2 ຊ. 4*

**70** *ກ. ດ້ວຍໄຫວ້ວອນຍືດຍາວ*

*ຂ. ດ້ວຍທ່ຽວໄປທາງນ້ຳທາງບົກ ເພື່ອໃຫ້ຄົນເຂົາສາດສະໜາ*

*ຄ. ດ້ວຍຄວາມສະອາດຂ້າງນອກ*

*ງ. ທາປູນຂາວ*

*ຈ. ດ້ວຍສ້າງອຸບໂມງໃຫ້ເຂົາ*

*ສ. ດ້ວຍຖືຄຳສອນທີ່ຕົກທອດຈາກບູຮານ*

*ຊ. ດ້ວຍການຖະຫວາຍສ່ວນສິບຢ່າງລະອຽດ*

**ຄຳຕອບ (ຕໍ່):**

**71** *ກ. ການຂ້າແລະຂົ່ມເຫງຜູ້ປະກາດພະທຳໃນສະໄໝນັ້ນ*

*ຂ. ຖ້ວຍນັ້ນຍັງເປື້ອນຂ້າງໃນ*

*ຄ. ເຂົາກືນກິນຄອບຄົວຂອງແມ່ໝ້າຍ*

*ງ. ເຂົາເຮັດໃຫ້ຄົນເຂົາສາດສະໜານັ້ນສົມກັບນະຮົກ*

*ຈ. ເຂົາບໍ່ເຂົາແລະບໍ່ໃຫ້ຜູ້ອື່ນເຂົາແຜ່ນດິນສະຫວັນ*

*ສ. ເຂົາປະຄວາມຍຸດຕິທຳ ຄວາມເມດຕາ ແລະຄວາມສັດຊື່*

*ຊ. ທີ່ມີກະດູກຄົນຕາຍຂ້າງໃນ*